# ເງື່ອນໄຂ (ToR)

## ຊ່ຽວຊານດ້ານການພັດທະນາອົງກອນ

**<u>ປະຫວັດຄວາມເປັນມາ</u>**

ຫ້ອງການ ດີວີວີ ອິນເຕີເນັດເຊີແນວ (DVV International) ແມ່ນສະມາຄົມເພື່ອການສຶກສາຜູ້ໃຫ່ຍຂອງເຢຍລະມັນ, ເຊິ່ງໄດ້ສົ່ງເສີມວຽກງານການສຶກສາຜູ້ໃຫຍ່ ແລະ ການຮຽນຮູ້ຕະຫຼອດຊີວິດໃນປະເທດລາວເລີ່ມແຕ່ປີ 2009 ເປັນຕົ້ນມາ, ສ່ວນຫຼາຍແມ່ນສົ່ງເສີມວຽກງານລະບົບຂອງການສຶກສານອກໂຮງຮຽນ (ກສນ). ເຊິ່ງໃນນີ້ ສູນພັດທະນາການສຶກສານອກໂຮງຮຽນ (ສພນ) ເປັນຄູ່ຮ່ວມງານໜຶ່ງທີ່ສຳຄັນ ໃນຖານະທີ່ເປັນເສນາທິການໃຫ້ກົມການສຶກສານອກໂຮງຮຽນ ຂອງກະຊວງສຶກສາທິການ ແລະ ກິລາ (ສສກ) ສພນ ມີພາລະບົດບາດໃນການໃຫ້ບໍລິການຕ່າງໆເຊັ່ນ: ການໃຫ້ຄຳປຶກສາ, ເສີມສ້າງຂີດຄວາມສາມາດ, ແລະ ສະໜອງຂໍ້ມູນຂ່າວສານຕ່າງໆ ໃຫ້ກັບວຽກງານ ກສນ ລວມທັງຫົວຂໍ້ຕ່າງໆ ໃນການຄົ້ນຄວ້າວິໄຈກ່ຽວກັບວຽກງານ ກສນ.

ໃນໄລຍະປີ 2021-2023 ນີ້, ຫ້ອງການດີວີວີ ອິນເຕີເນັດເຊີແນວ ມີຈຸດປະສົງເພື່ອເສີມສ້າງຄວາມເຂັ້ມແຂງໃຫ້ ສພນ ຕື່ມອີກ. ດັ່ງນັ້ນເປົ້າໝາຍຂອງໂຄງການທີ່ກ່ຽວກັບ ສພນ ມີດັ່ງນີ້:

"ສພນ ແມ່ນຖືກຮັບຮູ້ໃນຖານະເປັນສູນທີ່ສຳຄັນທີ່ສຸດໃນການສະໜອງການເສີມສ້າງຂີດຄວາມສາມາດ, ຄົ້ນຄວ້າ, ວັດຖຸອຸປະກອນ ແລະ ຊັບພະຍາກອນຕ່າງໆ ໃຫ້ແກ່ ກສນ ແລະ ໄດ້ສະໜອງການບໍລິການຢ່າງຕັ້ງໜ້າໃຫ້ກັບຜູ້ປະຕິບັດຢູ່ໃນວຽກງານ ກສນ".

ໜຶ່ງໃນສອງຕົວຊີ້ວັດທີ່ກ່ຽວຂ້ອງ: "ໃນປີ 2023, ອັດຕາຄວາມເພິ່ງພໍໃຈຕໍ່ກັບການບໍລິການຂອງ ສພນ ໃນຂັ້ນແຂວງ, ເມືອງ ຢູ່ທາງພາກກາງແມ່ນຢ່າງໜ້ອຍ 70 %."

ຂັ້ນຕອນທຳອິດແມ່ນວິເຄາະຈຸດແຂງ ແລະ ຈຸດອ່ອນຂອງ ສພນ ແລະ ການພັດທະນາແຜນໃນການສ້າງຂີດຄວາມອາດສາມາດທີ່ຈຳເປັນຂອງ ສພນ ແມ່ນອີງໃສ່ຂໍ້ມູນນີ້ເປັນຫຼັກ. ຂັ້ນຕອນທີສອງ ການດຳເນີນການເຝິກອົບຮົມຕາມຫຼັກສູດຂອງສະຖາບັນ ຫຼື Curriculum institutionALE (ມີ link ຊ້ອນທ້າຍ) ຂອບເຂດຂອງການປະຖົມນິເທດເພື່ອເສີມສ້າງຄວາມເຂັ້ມແຂງຂອງສະຖາບັນການສຶກສາສຳລັບຜູ້ໃຫຍ່ ແລະ ພັດທະນາການສຶກສາໂດຍ DVV International ແລະ ການວິເຄາະດັ່ງກ່າວ.

**ຈຸດປະສົງ:**

ຄູ່ຮ່ວມສັນຍາຈະຕ້ອງດຳເນີນການເຝິກອົບຮົມ ແລະ ໃຫ້ຄຳປຶກສາແບບມີສ່ວນຮ່ວມບົນພື້ນຖານໃນຫຼັກສູດຂອງສະຖາບັນ (Curriculum institutionALE). ຈຳນວນມື້ທີ່ແນ່ນອນຂອງການເຝິກອົບຮົມ ແລະ ການໃຫ້ຄຳປຶກສາແມ່ນຈະໄດ້ຮັບການເຫັນດີຕົກລົງລະຫວ່າງ DVV International, ສພນ ແລະ ຄູ່ຮ່ວມສັນຍາໃນຊ່ວງເວລາທີ່ກຳລັງດຳເນີນຫຼັກສູດດັ່ງກ່າວ. ຈຳນວນມື້ທີ່ຄາດຄະເນໄວ້ແມ່ນປະມານ 20 ຫາ 40 ມື້ ເຊິ່ງຈະຕ້ອງເລີ່ມພາຍໃນປີ 2022.

**ວິທີການ:**

ຄູ່ຮ່ວມສັນຍາຈະຕ້ອງໄດ້ສະຫຼຸບຢ່າງຊັດເຈນວ່າພວກເຂົາຈະມີວິທີການສ້າງຂີດຄວາມສາມາດ ສຳລັບ ສພນ ຕາມຫຼັກສູດ Curriculum institutionALE ໄດ້ແນວໃດ.

**ເງື່ອນໄຂການຄັດເລືອກ:**

ຄູ່ຮ່ວມສັນຍາຈະຖືກເລືອກຕາມເກນຕ່າງໆດັ່ງລຸ່ມນີ້:

- ມີປະສົບການດ້ານການພັດທະນາອົງການ (25%)
- ມີປະສົບການກ່ຽວກັບການສຶກສານອກລະບົບໃນລາວ (15%)
- ມີວິທີການໂນ້ມນ້າວ (ໜ້າເຊື່ອ) (30%)
- ງົບປະມານ (30%) ອີງຕາມຕົ້ນທຶນຂອງການເຮັດວຽກໃນ 1 ມື້

ເອກະສານຂອງຜູ້ສະໝັກປະກອບມີຮ່າງວິທີການວິໄຈ, ຊີວະປະຫວັດ ກ່ຽວກັບຄວາມຊຳນານ ແລະ ງົບປະມານທີ່ສະເໜີ ແລ້ວສົ່ງໄປຫາຜູ້ອຳນວຍການປະຈຳພາກພື້ນ ຂອງ DVV International, ທ່ານ Johann Heilmann ຜ່ານທາງເມວ (heilmann@dvv-international.la) ກ່ອນວັນທີ 4 ກຸມພາ 2022. ສາມາດສົ່ງຄຳຖາມເພື່ອຄວາມກະຈ່າງແຈ້ງໄດ້ຮອດວັນທີ 31 ມັງກອນ 2022. ທ່ານສາມາດຂໍລາຍລະອຽດຂອງຫຼັກສູດໄດ້ທາງອີເມວ.

Link ຫຼັກສູດຂອງ Curriculum institutionALE: https://www.dvv-international.la/fileadmin/files/south-and-southeast-asia/documents/Documents_2021/Curriculum_institutionALE-LA.pdf